ປະເພນີພິທີກຳ

# ຮີດຄອງບູຮານລາວ



18.000

ຮຽບຮຽງໂດຍ: ມະຫາ ບຸນເລີດ ທ່າມະຈັກ
ມະຫາ ແກ້ວ ສີຣິວົງສາ

ປະເພນີພິທີກຳ

# ຮີດຄອງບູຮານລາວ

ຮຽບຮຽງໂດຍ : ບຸນເລີດ ທຳມະຈັກ
ມະຫາແກ້ວ ສີຣິວົງສາ

ພິມທີ່ : ວິສາຫະກິດໂຮງພິມສຶກສາ
ທະບຽນພິມ : 55 ພຈ/0604 2004
ຈຳນວນ : 2.000 ຫົວ

# ຄຳນຳ

## ( ໃນການພິມຄັ້ງທີສອງ )

ໃນນາມຫໍສະໝຸດແຫ່ງຊາດ ຂອງ ສ.ປ.ປ. ລາວ ແລະ ຫົວໜ້າໂຄງການສົ່ງເສີມການອ່ານແຫ່ງຊາດ, ຂ້າພະເຈົ້າຖືວ່າ ການພິມໜັງສືທີ່ມີຄຸນປະໂຫຍດ ເພື່ອປະກອບສ່ວນເຂົ້າໃນວຽກງານການປຸກລະດົມການອ່ານ ແມ່ນຂອງຂວັນອັນປະເສີດຍິ່ງໜັກ ເພາະມັນຈະໄດ້ແຈກຢາຍໄປທົ່ວສັງຄົມໄດ້ອ່ານ ໄດ້ຮຽນຮູ້ພິທີກຳ ແລະ ຮີດຄອງປະເພນີບູຮານອັນດີງາມຂອງລາວເຮົາ.

ຜົນງານອັນນີ້ ແມ່ນພະລັງດັນສຳຄັນອັນນຶ່ງ ທີ່ຈະກະຕຸ້ນໃຫ້ມີການເຫັນຕິງກະທົບໃສ່ ການປົກປັກຮັກສາຮີດຄອງປະເພນີບູຮານຂອງລາວເຮົາ ໃຫ້ມີຊີວິດຊີວາເຊັ່ນດຽວກັບກັບ ການຈັດພິມຄືນຄັ້ງທີ 2 ເຊິ່ງຄະນະສົ່ງເສີມການອ່ານ ໄດ້ສະລະທຶນສ່ວນບຸກຄົນ ເພື່ອຈັດພິມຂຶ້ນໂດຍໄດ້ຮັບການອະນຸຍາດຢ່າງເປັນທາງການ ຈາກຫົວໜ້າໂຄງການປົກປັກຮັກສາໜັງສືໃບລານລາວ ແລະ ຜູ້ຮຽບຮຽງ. ດັ່ງນັ້ນ ໜັງສືພິທີກຳ ແລະ ຮີດຄອງປະເພນີບູຮານສະບັບນີ້ ເຊິ່ງປວງຊົນນິຍົມຊົມຊອບ ແລະ ນຳມາປະຕິບັດເຂົ້າໃນການດຳລົງຊີວິດຂອງຕົນ, ໄດ້ມີການເຕີມຂໍ້ມູນຢ່າງຫລວງຫລາຍ ບັນຈຸເຂົ້າໃນເຫລັ້ມຢ່າງສົມບູນ, ຂ້າພະເຈົ້າ

ຫວັງຢ່າງຍິ່ງວ່າ ສິ່ງໃດທີ່ເຮັດໃຫ້ຄົນນິຍົມອ່ານ ຫລືສ້າງວັດທະນະທຳ ມັກອ່ານ ໃຫ້ເຕີບໃຫຍ່ຄຽງຄູ່ກັບການສືບທອດວັດທະນະທຳອັນດີງາມນີ້ ແມ່ນອຸດົມການອັນສູງສົ່ງຂອງຫໍສະຫມຸດແຫ່ງຊາດ.

ຂໍສະແດງຄວາມຂອບໃຈນຳບັນດາບຸກຄົນທີ່ສະລະທຶນຈັດພິມ ແລະ ຈຳຫນ່າຍລາຄາຍ່ອມເຍົາ ບໍ່ຫວັງຜົນກຳໄລ.

ຂໍຊົມເຊີຍບັນດາທ່ານທັງຫລາຍ ທີ່ຮ່ວມແຮງຮ່ວມໃຈ ພາກັນອ່ານ ຫນັງສື ເພື່ອພັດທະນາຄຸນນະພາບຊີວິດໃຫ້ກ້າວໄກ.

**ໃຈຮັກຫນັງສື ຈົ່ງແບມືຕ້ອນຮັບຫນັງສືສະບັບນີ້ອີກເທື່ອນຶ່ງ.**

ວຽງຈັນ, ວັນທີ 1 ເມສາ 2004
*ຜູ້ອຳນວຍການ ຫໍສະຫມຸດແຫ່ງຊາດ*
*ຫົວຫນ້າ ໂຄງການສົ່ງເສີມການອ່ານແຫ່ງຊາດ*

*ກົງເດືອນ ເນດຕະວົງ*

# ຄຳເຫັນຂອງກົມພິມຈຳໜ່າຍ

ຂ້າພະເຈົ້າໄດ້ອ່ານເບິ່ງ ປຶ້ມຄູ່ມື "ຮີດຄອງປະເພນີບູຮານ" ຂອງທ່ານ ມະຫາແກ້ວ ສິງວົງສາ ແລະ ມະຫາບຸນເລີດ ທຳມະຈັກ ໄດ້ເກັບກຳທ້ອນໂຮມ ນຳລົງພິມເປັນການແຈກຢາຍ ໃຫ້ເປັນວິທະຍາທານແກ່ຊາວພຸດທະບໍລິສັດຜູ້ທີ່ມີຈິດໃຈມັກໄຄ່ ສ້າງບຸນກະທຳທານ ໄດ້ນຳໄປໃຊ້ເປັນແນວທາງປະຕິບັດ ເຫັນວ່າມີປະໂຫຍດແກ່ ວັດທະນະທຳສັງຄົມລາວ, ຍ້ອນວ່າ ຜ່ານມາ ແນວຄິດ ແລະ ພູມປັນຍາຂອງຄົນບູຮານໄດ້ສະສົມຮີດຄອງປະເພນີອັນດີງາມໄວ້ຫລາຍແງ່ ຫລາຍສາຂາ ສິ່ງເຫລົ່ານີ້ ມີຢູ່ຕາມວັດວາສາສະໜາ ແລະ ຂຽນໄວ້ໃນລານກ້ອມ ເພື່ອເປັນຄູ່ມືໃນການນຳໃຊ້ສະດວກຂອງຄົນບູຮານ ລວມທັງຄູບາອາຈານ ຜູ້ຊົງຄຸນວຸດທິເຄີຍປະຕິບັດມາແລ້ວ.

ການພິມຄືນ ຫລືທ້ອນໂຮມເອົາເລື່ອງ ຮີດຄອງປະເພນີ ມາພິມເປັນອັກສອນລາວໃໝ່ ໃຫ້ທຸກຄົນອ່ານໄດ້ ແລະ ນຳໃຊ້ໃຫ້ເກີດປະໂຫຍດແກ່ສັງຄົມ ນັບວ່າເປັນແນວຄິດທີ່ດີ ແລະ ມີນ້ຳໃຈເອື້ອເຟື້ອເພື່ອແຜ່ຂອງທ່ານທັງສອງ ທີ່ໄດ້ກ່າວນາມມານັ້ນ.

ກົມພິມຈໍາຫນ່າຍ ແລະ ຫໍສະຫມຸດ ກໍຄື ໃນນາມສ່ວນຕົວ ເຫັນວ່າ ປື້ມຄູ່ມືຮີດຄອງປະເພນີເຫລັ້ມນີ້ ຄວນໄດ້ຮັບການສະຫນັບສະຫນູນ ແລະ ເຜີຍແຜ່ໃຫ້ແກ່ທ້ອງຖິ່ນ ກໍຄືຊາວພຸດທະບໍລິສັດທົ່ວສັງຄົມໄດ້ນໍາໃຊ້ ແລະ ເອົາເປັນແບບຢ່າງໃນການຈັດພິທີກໍາ ທໍາລາບາສີສູ່ຂວັນ ໃຫ້ເປັນ ຮີດຄອງປະເພນີສືບທອດ ຮີດຄອງວັດທະນະທໍາສັງຄົມ ໃຫ້ແກ່ປະເທດ ຊາດ ກໍຄືສັງຄົມລາວຂອງເຮົາ ເຊິ່ງມີຮີດຄອງປະເພນີອັນດີງາມ ມາແຕ່ດຶກກໍາບັນ.

ຫວັງວ່າ ໃນໂອກາດຕໍ່ໄປ ຈະໄດ້ເຫັນຜົນງານການຄົ້ນຄວ້າ ແລະ ພິມເຜີຍແຜ່ປື້ມທີ່ມີປະໂຫຍດໃຫ້ແກ່ສັງຄົມຄືແບບນີ້ອີກ.

ຂ້າພະເຈົ້າ ຂໍເປັນກໍາລັງໃຈໃຫ້ແກ່ ຜົນສໍາເລັດໃນການຄົ້ນຄວ້ານີ້ ແລະ ຫວັງວ່າ ຈະໄດ້ເຫັນຜົນງານໃນການຄົ້ນຄິດ ແລະ ລິດຈະນາເອົາ ພູມປັນຍາຂອງຄົນບູຮານອອກມາຮັບໃຊ້ໃຫ້ແກ່ປະເທດຊາດ ກໍຄືຊີວິດ ສັງຄົມ ໃນສະໄຫມປັດຈຸບັນໄດ້ຟື້ນຟູຄືນ ແລະ ສືບຕໍ່ຮັກສາເອກະລັກ ທາງດ້ານວັດທະນະທໍາຂອງຊາດສືບຕໍ່ຊົ່ວລູກ ຊົ່ວຫລານ ໄປອີກ ຍາວນານ.

ວຽງຈັນ, ວັນທີ 1 ກັນຍາ 1997

ຫົວຫນ້າກົມພິມຈໍາຫນ່າຍ ແລະ ຫໍສະຫມຸດ

ທີ່ປຶກສາ ໂຄງການປົກປັກຮັກສາຫນັງສືໃບລານລາວ

**ຄໍາເສັງ ສຸນດາຣາ**

# ບົດນຳໃນການພິມ

ປຶ້ມຄູ່ມື "ຮີດຄອງປະເພນີບູຮານ" ທີ່ທ່ານກຳລັງອ່ານຢູ່ນີ້ ເກີດຂຶ້ນຈາກແນວຄິດ ແລະ ການຄົ້ນຄວ້າຂອງ ທ່ານມະຫາແກ້ວ ສິງວົງສາ ຄູສອນໂຮງຮຽນສ້າງຄູສົງວັດອົງຕື້ໃນເມື່ອກ່ອນ, ຜູ້ກ່ຽວມີຈຸດປະສົງຈະພິມເພື່ອຊອກຫາກ້ອນທຶນມາບູລະນະສ້ອມແປງໂຮງຮຽນ ສ່ວນຫນຶ່ງ, ອີກສ່ວນຫນຶ່ງ ກໍເພື່ອເປັນວິທະຍາທານ ແຈກຢາຍໃຫ້ສາສະນິກະຊົນຜູ້ຝັກໄຝ່ໃນບຸນກຸສົນ ແລະ ຮັກສາວັດທະນະທຳ ຮີດຄອງປະເພນີຂອງລາວເຮົາ.

ແຕ່ຍ້ອນຂາດທຶນຮອນໃນການພິມເປັນຈຳນວນຫລາຍ ຕົກມາຮອດປີ 1994 ທ່ານມະຫາແກ້ວ ຈຶ່ງໄດ້ມອບສະບັບຂຽນໃຫ້ແກ່ ໂຄງການປົກປັກຮັກສາຫນັງສືໃບລານລາວ ໂດຍຜ່ານຂ້າພະເຈົ້າ, ຂ້າພະເຈົ້າໄດ້ກວດກາ ຈັດບົດ ແລະ ແບ່ງພາກ ອອກເປັນສອງພາກ :

**ພາກທີຫນຶ່ງ :** "ຄຳຖວາຍທານຕ່າງໆ" ເພື່ອເປັນແບບຢ່າງໃຫ້ແກ່ຜູ້ທີ່ຮັບຜິດຊອບກັບວຽກວັດການທານ ກໍຄືເຖົ້າແກ່ຜູ້ນຳພາທຳບຸນສົນກິນທານ ໄດ້ເອົາໄປນຳພາຊາວບ້ານພຸດທະບໍລິສັດ ຜູ້ຕ້ອງການສ້າງບຸນ ສ້າງກຸສົນ ໃນບ້ານເມືອງຂອງຕົນ.

**ພາກທີສອງ :** "ຮີດຄອງບູຮານ ການທຳລູ່ສູ່ຂວັນ ຫລືຄູບລາບາສີ" ເຊິ່ງຂ້າພະເຈົ້າເຫັນວ່າ ແມ່ນຮີດຄອງວັດທະນະທຳສັງຄົມ ທີ່ທົ່ວທຸກພາກທຸກເຂດຂອງປະເທດລາວເຮົາ ຍັງປະພຶດປະຕິບັດກັນມາ. ເວົ້າໄດ້ວ່າ ໃນຊີວິດຂອງຄົນເຮົາ ຈະມີການມັດແຂນ ເອີ້ນຂວັນກັນ ໃນພິທີຕ່າງໆ ເຊັ່ນ : ມື້ອອກກຳ (ຄຳເດືອນ) ມື້ເອົາຜົວເອົາເມຍ ແລະ ອື່ນໆ ຈົນຮອດເຖົ້າຮອດແກ່ ບາງເທື່ອການເຮັດບຸນ (ແຈກເຂົ້າ) ອຸທິດສ່ວນກຸສົນໃນງານຊາປະນະກິດ (ເຜົາສົບ) ແລ້ວ, ເຖົ້າແກ່ກໍ່ຈະມີພິທີສູ່ຂວັນ ຜູກແຂນ ເພື່ອໃຫ້ຄອບຄົວມີຄວາມປັກກຸ່ມຊຸ່ມເຢັນ ຫາຍເຄາະ ຫາຍເຂັນ ມີກຳລັງໃຈສືບຕໍ່ກໍ່ສ້າງເຮືອນຊານ ລ້ຽງລູກລ້ຽງຫລານ ສືບຕໍ່ໄປອີກ.

ເຫັນວ່າ ປຶ້ມຄູ່ມືຖວາຍທານ ແລະ ຄູບລາບາສີສູ່ຂວັນເຫລັ້ມນີ້ ອາດບໍ່ສົມບູນ ຫລືເປັນຄຳອວຍພອນທີ່ທຳມະດາທົ່ວໄປ ແຕ່ກໍ່ຄົງເປັນປະໂຫຍດໃຫ້ແກ່ສັງຄົມ ກໍ່ຄືຊາວພຸດທະບໍລິສັດທັງຫລາຍ ໄດ້ນຳໃຊ້ໄປກ່ອນ. ຖ້າຫາກທ່ານຜູ້ອ່ານເຫັນວ່າເປັນປະໂຫຍດ ແລະ ຈະມີຄຳແນະນຳໃດໆ ເພີ່ມຕື່ມ ຂ້າພະເຈົ້າຍິນດີນ້ອມຮັບເອົາຄຳແນະນຳຕຳໜິສິ່ງຂ່າວເຫລົ່ານັ້ນ ມາເປັນເຄື່ອງປະທັດດັດແປງໃຫ້ເນື້ອໃນອຸດົມຮັ່ງມີຂຶ້ນກວ່າເກົ່າ.

ບຸນກຸສົນໃດທີ່ໄດ້ຈາກການຄົ້ນຄິດ ແລະ ຈັດພິມປຶ້ມເຫລັ້ມນີ້ ຂ້າພະເຈົ້າ ຂໍອຸທິດສ່ວນບຸນອັນນີ້ ໃຫ້ແກ່ ບຸພາຈານ ປູ່ຍ່າ ຕານາຍ ທີ່ໄດ້ຄົ້ນຄິດປະດິດແຕ່ງ ຄຳເວົ້າ ແລະ ພອນໄຊໃນເວລາສູດຂວັນ, ເອີ້ນຂວັນ ຈົ່ງໄດ້ຮັບສ່ວນບຸນກຸສົນອັນນີ້ ແລະ ຂໍໃຫ້ບັນດາທ່ານ ຜູ້ທີ່ໄດ້ ນຳໃຊ້ປຶ້ມເຫລັ້ມນີ້ ຈົ່ງພິຈາລະນາ ເລືອກເຟັ້ນເອົາອັນທີ່ເຫມາະສົມ ແລະ ມີຜົນປະໂຫຍດໃຫ້ແກ່ຕົນ ແລະ ສັງຄົມລາວເຮົາ ໃຫ້ລູກຫລານ ໄດ້ຮູ້ຈັກ ຮີດຄອງປະເພນີອັນດີງາມ ຕົກຮອດຈອດເຖິງ ເຊັ່ນລູກ ເຊັ່ນ ຫລານ ສືບໆໄປ.

**ຫມາຍເຫດ :** ການນຳໃຊ້ອັກສອນ ແລະ ພາສາຄຳເວົ້າໃນປຶ້ມເຫລັ້ມນີ້ ມີທັງພາສາລາວ ແລະ ພາສາບາລີ ຫລື ບາລີ-ລາວ ປະສົມກັນໄປ, ເນື່ອງຈາກຄົນບູຮານລາວເຄີຍນຳໃຊ້ຜ່ານ ມາແລ້ວ, ທັງນີ້ ກໍ່ເພື່ອເປັນການອະນຸລັກຮັກສາໄວ້ ໃຫ້ຄົນຮຸ່ນຫລັງໆ ໄດ້ຮັບຮູ້.

ຂໍອວຍພອນໃຫ້ບັນດາທ່ານ ຈົ່ງມີອາຍຸ ວັນນະ ສຸຂະ ພະລາ ນາໄມ ສຸຂະພາບແຂງແຮງ ທຸກໆທານເທີ້ນ.

ຜູ້ທ້ອນໂຮມ ແລະ ຈັດພິມ
ມະຫາບຸນເລີດ ທຳມະຈັກ
ມະຫາແກ້ວ ສິຣິວົງສາ

24/VII
ທານເຈົ້າໝາຍ

# ບົດແນະນຳໃນການປະກອບພິທີກຳຕ່າງໆ

- ພິທີທາງພຸດທະສາສະໜາ ນິຍົມກັນມາໃນອະດີດ ກໍຄືປັດຈຸບັນ ແມ່ນການຈັດຫາດອກໄມ້ທູບທຽນ ເຄື່ອງສັກກາລະບູຊາ ຄຸນພຣະຣັດຕະນະໄຕແກ້ວສາມປະການຄື : ພຣະພຸດທະເຈົ້າ, ພຣະທັມມະເຈົ້າ ແລະ ພຣະສັງຄະເຈົ້າ ທີ່ຊາວພຸດບໍຣິສັດຖືເອົາເປັນທີ່ເພິ່ງປະຈຳໃຈ. ຈຶ່ງມີຫລັກນິຍົມກັນວ່າ : ດອກໄມ້ນັ້ນຈະບໍ່ໃຊ້ດອກໄມ້ທີ່ມີສີແດງ ຫລື ສີແສດ, ສີມ່ວຍເກີນໄປ ຕ້ອງເປັນດອກໄມ້ທີ່ມີສີຂາວ, ເຫລືອງ, ສີອື່ນໆ ທີ່ພໍອະນຸໂລມໄດ້ ສຳຄັນແມ່ນໃຫ້ສົດໃສສະອາດ ບໍ່ຫ່ຽວແຫ້ງແກ່ເຖົ້າຈົນຂຸໂອຍ ເປັນການສະແດງເຖິງຄວາມບໍລິສຸດສະອາດ ຈາກພາຍໃນຄືຈິດໃຈຂອງຄົນເຮົາ.

- ທູບ ແລະ ທຽນ ເປັນເຄື່ອງໃຕ້ບູຊາ ມີຫລັກນິຍົມວ່າ : ໃຫ້ມີແຕ່ 2 ເຫລັ້ມຂຶ້ນໄປ ເອີ້ນວ່າ: " ດອກໄມ້ທຽນຄູ່ " ຂຶ້ນຢູ່ກັບພິທີນັ້ນໆ ຕົວຢ່າງ: ໄປນິມົນພຣະມາທຳບຸນ ຈະໃຊ້ດອກໄມ້ທຽນຄູ່, ຖ້າແຕ່ງຂັນບູຊາ ຈະໃຊ້ດອກໄມ້ 5 ຄູ່ ທຽນ 5 ຄູ່ ເອີ້ນວ່າ: ຂັນຫ້າ ຫລື ດອກໄມ້ 8 ຄູ່ ທຽນ 8 ຄູ່ ເອີ້ນວ່າ: ຂັນ 8, ໃຊ້ເປັນຂັນຄາລະວະສົມມາກໍເຊັ່ນດຽວ. ທຽນທີ່ໃຊ້ໃນພິທີກຳຈະໃຊ້ທັງທຽນທີ່ໃຊ້ເຜີ້ງສົດສີເປັນເຫລັ້ມ ຫລືວ່າ ທຽນສຳເລັດຮູບ ທີ່ມີຂາຍຕາມຕະຫລາດກໍໄດ້ ແຕ່ບໍ່ໃຊ້ສີແດງ.

- ເມື່ອທຸກຢ່າງທີ່ກະກຽມໃນການປະກອບພິທີແລ້ວ ອາຈານ ຫລືຜູ້ນຳພາພິທີ ເອີ້ນວ່າ: ສີລະວັດ ຫລືມັກຄະທາຍົກ ຈະນຳພາ ໄຫວ້ພຣະ ຮັບສິນ ແລະ ນິມົນພຣະສົງສູດປະຣິດຕະມຸງຄຸນ ແລ້ວຈຶ່ງ ຖວາຍທານຕາມທີ່ປຶ້ມນີ້ໄດ້ຈັດໄວ້ ເປັນແຕ່ລະໂອກາດຂອງການກະທຳ ບຸນ. ອີກອັນໜຶ່ງທີ່ພວກຊາວພຸດເຮົາເຄີຍເຮັດ ແລະ ມັກເຫັນ ໃນພິທີກຳ ທາງສາສະໜາ ແມ່ນການປ່າວເທວະດາ ຫລື " **ສັກເຄເທວະດາ** " ເພື່ອໃຫ້ເພິ່ນມາຮ່ວມເປັນສັກຂີພິຍານໃນການທຳພິທີມຸງຄຸນຕ່າງໆ ເຊັ່ນ : ການທຳບຸນບ້ານເຮືອນ, ອາວະຫະ - ວິວາຫະມຸງຄຸນ, ຂຶ້ນບ້ານໃຫມ່ໃສ່ຫຍ້າງາມ ການເອົາຜົວເອົາເມຍເປັນຕົ້ນ ແມ່ນໄດ້ ປະກາດປ່າວຮ້ອງໃຫ້ເທບພະດາອາຣັກ ຜູ້ເພິ່ນຮັກສາສະຖານທີ່ຕ່າງໆ ໄດ້ມາຮ່ວມອຸບໂປໂມທະນາທານ ເປັນການຮັບຮູ້ເອົາສິ່ງດີໆ ທີ່ພວກ ເຮົາໄດ້ກະທຳໄປນັ້ນ ນຳໄປບອກແກ່ ພໍ່ແມ່ ຍາດຕິກາວົງສາ ທີ່ລ່ວງລັບ ໄປແລ້ວ ເຊິ່ງພວກເຮົາໄດ້ອຸທິດບຸນກຸສົນໄປໃຫ້ ແລະ ຖ້າວ່າພວກກ່ຽວ ຫາກບໍ່ຮູ້ ຫລືມາຮັບບໍ່ໄດ້ ເທວະດາອາຣັກ ກໍຈະຮັກສາບຸນກຸສົນອັນນັ້ນ ໄວ້ແກ່ເຮົາ ຫລືນຳໄປບອກ ແກ່ຍາດຕິກາວົງສາເຫລົ່ານັ້ນ.

* ມີບາງຄຳເຫັນຂອງນັກປາດອາຈານບາງທ່ານວ່າ : ການກະ ທຳບຸນ ຫລືພິທີກຳບາງຢ່າງ ທີ່ເອີ້ນວ່າ : ອະວະມຸງຄຸນ ຄືສິ່ງທີ່ເກີດຂຶ້ນ ໂດຍອຸບັດຕິເຫດ ເຊັ່ນວ່າ: ການຕາຍທີ່ບໍ່ປົກກະຕິ ມີຟ້າຜ່າ, ຄວາຍຊົນ, ຕົກຕົ້ນໄມ້ ເປັນຕົ້ນ ບໍ່ນິຍົມກັນປ່າວສັກເຄເທວະດາ ຖືວ່າການເສຍ ຊີວິດທີ່ບໍ່ທຳມະດາ ຂໍ້ນີ້ ຂ້າພະເຈົ້າກໍຂໍຝາກໄວ້ເປັນແນວຄິດວ່າ ຄວນ

ຫລືບໍ່ ກໍໃຫ້ພິຈາລະນາກ່ອນ ຫລື ຈະອີງໃສ່ປະເພນີພື້ນຖານເປັນຫລັກ ກໍໄດ້.

*** ຄຳປ່າວເທວະດາ ປາລີວ່າ :**

ສັກເຄ ກາເມ ຈະຣູເປ ຄິລີສິກຂາລະຕະເຕ ຈັນຕາລິກເຂວິມາເນ ທີເປຣັດເຖ ຈະຄາເມ ຕະຣຸວະນະຄະຫາເນເຄຫັງ ວັດຖຸມຫີເຂດເຕ ພູມມາ ຈະຍັນຕຸເທວາ ສາຣັດຖະວິສະເມ ຍັກຂາ ຄັນທັບພານາຄາ ຕິດຖັນຕາ ສັນຕິເກ ຍັງມຸນີວັດຈະນັງ ສາທະໂວ ເມສຸນັນຕຸ ທັມມັດສາວະນະກາໂລ ອະຍັມພະທັນຕາ.

*** ຄຳແປສັກເຄ ເທວະດາວ່າ :**

ອຸກາສະ ຂ້າແຕ່ພຣະສັບພັນຍູໂຄດົມພຸດທະເຈົ້າ ຝູງຂ້າ ທັງຫລາຍ ຈັກຂໍໂອກາດຣາດທະນາຝູງຫມູ່ເທບພະດາເຈົ້າທັງຫລາຍ ມວນຫມູ່ ອັນຢັ້ງຢູ່ໃນທິດສາທັງມວນ ໃນສະກາມາວະຈອນສະຫວັນ ຊັ້ນຟ້າ ທັງສິບຫ້າຊັ້ນພົມກໍດີ ອັນຢູ່ໃນກາມະພົບ, ຣູບປະພົບ ໃນຮ່ອມ ຫ້ວຍ ແລະ ພູເຂົາ ທັງສິງຂອນ ແລະ ຍ່ອມຫຍ້າ ໃນອາກາດເວຫາ ໃນທິບພະວິມານຄຳກໍດີ ພູມາເທວະດາອາຣັກທີ່ຢູ່ເຝົ້າ ແລະ ຮັກສາຍັງ ເຄຫາສະຖານບ້ານເຮືອນ, ວັດວາອາຮາມ, ບ້ານນ້ອຍ ແລະ ເມືອງໃຫຍ່ ໃນທະວີບທັງສີ່ກໍດີ ຍັກຂາ ຄັນທັບພານາກຄຸດ ໃນມະນຸດສະໂລກ ທັງມວນ ຂໍຈົ່ງຊວນກັນມາເພື່ອເປັນ ສັກຂີພິຍານໃນການສ້າງນ້ຳ ກະທຳບຸນ ຮັກສາສິນກິນທານ ແລະ ຟັງພຣະສັດທັມແຫ່ງອົງມຸນີເຈົ້າ ໃນໂອກາດນີ້ ທຸກຕົນທຸກອົງ ແດ່ກໍຂ້າເທີ້ນ.

## ແປ ສັກເຄເທວະດາ

( ປ່າວເທວະດາ ວັດຊ່າງຄ້ອງ ຫລວງພະບາງ)

ສາທຸ ສາທຸ ອຸກາສະໆ ຂ້າແຫ່ງພຣະສັບພັນຍູໂຄດົມພຸດທະເຈົ້າ ຝູງຂ້າທັງຫລາຍ ຈັກຂໍອາຣາດທະນາແກ່ຝູງຫມູ່ເທບພະຍຸດາເຈົ້າທັງຫລາຍ ອັນຢາຍຢັງຢູ່ໃນຫມູ່ທິດສາຕ່າງໆ ນານາ ມີຕົ້ນວ່າ :

| | |
|---|---|
| ສັກເຄ : | ອັນຢູ່ໃນຊໍ່ຊັ້ນກາມາວະຈອນ ມະຫາສະຫວັນທັງຫົກຊັ້ນຟ້າ ທັງສິບຫ້າຊັ້ນພົມກໍດີ. |
| ກາເມຈະຣູເປ : | ອັນຢູ່ໃນກາມມະພົພົບ ແລະອັນຢູ່ໃນຮູບປະພົບ ຄືໂສລັດສະມະຫາພົມກໍດີ. |
| ຄິລິສິກຂາລະຕະເຕ : | ອັນຢູ່ໃນສິງຂອນ ຄີລີຫ້ວຍຮ່ອມ ແລະຮາວເຂົາ ກໍດີ . |
| ຈັນທະຣິກເຂວິມາເນ : | ອັນຢູ່ໃນອາກາດເວຫາ ແລະ ຢູ່ໃນວິມານທິບຣັດຕະນະມຸນທຽນ ກໍດີ. |
| ທີເປຣັດເຖຈະຄາເມ : | ອັນຢູ່ໃນເກາະກວຽນທັງປວງ ທັງເມືອງຫລວງນ້ອຍໃຫຍ່ ແລະຝູງມັກໃຄ່ຢູ່ບ້ານນອກຂອກຊົນນະບົດ ກໍດີ. |
| ຕະຣຸວັນນະຄະຫາເນ : | ຍ່ອມມາປາກົດ ສີສົມອັນຢູ່ປ່າທົ່ວທິດສາທັງມວນ |
| ເຄທະວັຕຖຸມຫິເຂດເຕ : | ທີ່ຢູ່ຕາມເຄຫາຢ້າວເຮືອນ ເຮືອກສວນໄຮ່ນາກໍດີ. |

| | |
|---|---|
| ພູມມາຈາຢັນຕຸເທວາ : | ຝູງເທບພະຍຸດາເຈົ້າທັງຫລາຍ ອັນຢາຍຢັງຢູ່ເຫນືອແຜ່ນດິນ ຖິ່ນຖານລົງຊານພະກຸດຕີ ຈົ່ງສະເດັດລີລາມາທຸກຖ້ວນພ້ອມພຽງກັນ. |
| ສະລະຖະວິສະເມ : | ທີ່ຢູ່ໃນນ້ຳ ແລະ ເທິງບົກ ທັງເກາະດອນ ອັນບໍ່ຮາບກ້ຽງພຽງສະເຫມີ. |
| ຍັກຂະຄັນທັພພະນາຄາ : | ບໍ່ໃຊ້ແຕ່ເທົ່ານີ້ ມີທັງຍັກຂະຄັນທັບພານາຄະຣາດ. |
| ຕິດຖັນຕາ : | ອັນຕັ້ງຢູ່ໃນສະຖານທີ່ໃດໆກໍດີ. |
| ສັນຕິເກຍັງມຸນີວັດຈະນັງ: | ເທບພະຍຸດາເຈົ້າທັງຫລາຍ ຈົ່ງສະເດັດເຂົ້າມາສູ່ທີ່ພະມະຫາມຸນີ ຕົນເປັນນັກປຣາດອາດຈັກສຳແດງຊວນເຊີນພຸດທະມົນໃຫ້ເປັນສະຫວັດສະດີມຸງຄຸນໃນຣັດຕະນະເຂດວັດວາອາຣາມ ແຫ່ງຝູງຂ້າທັງຫລາຍ. |
| ສາທະໂວເມ : | ດູຣາເທບພະຍຸດາເຈົ້າທັງຫລາຍ |
| ສຸນັນຕຸ : | ຈົ່ງຕັ້ງໂສຕາຜາສາດດາຟັງ ຍັງສັດທະສຳນຽງສຽງໂອພາດອາດສະນະພານທອງ ມາຣອງຮັບ ຄື ຣົດສະທັມມະເທສນາ ດອມຝູງຂ້າ. |

ທັມມັດສະວະນະກາໂລ ອະຍັມພະທັນຕາ.

## ອາຣາທະນາເທສະໜາທັມ

ໂອກາສະໆ ຂ້າພະເຈົ້າຈັກຂໍອາຣາທະນາວິງວອນ ເຊີ້ງພະຄຸນເຈົ້າ ຜູ້ເປັນພຸດທະຊິໂນຣົດ ແຫ່ງສິດຕະຖາຄົດ ອັນປາກົດຢູ່ໃນສິງສານສັນຕິທະສັນຕາ ຝູງມີພຍານ້ອຍໃຫຍ່ ທີ່ວ່າຍັງໄປ່ມີປະທີບແກ້ວກລ່າວແລ້ວ ຄື ພະສູຕ ພະວິໄນ ພະປະຣະມັດ ຈະຕຸຣາຣິຍະສັດ ຄືໄມ້ຄ້ອນ ອັນມາຕີລົງໃນທ່າມກາງແຫ່ງຝູງໝູ່ປານະສັດ ອັນມາຂັດຂວາງໜ່ວງໜ່ຽວໄວ້ໃຫ້ສາລະວົນ ທົນທຸກຂະປະໂພຊະນາ ເຍນະອຳຫາກັງ ຂໍອັງເຊີນເຖີດ ຢ່າໄດ້ມາຫລົງໄຫລຢູ່ໃນສະໝຸດທະວາລີ ຈົ່ງຊີ້ຊ່ອງໃຫ້ເຫັນປ່ອງທິດສາທົນຫລວງ ອັນເປັນທີ່ສຳບວນຄວນເດີນເຂົ້າໄປສູ່ບຸຣົມມະສົມພານ ຄືນິຣະພານນັ້ນ ແດ່ກໍຂ້າເທີ້ນ (ຈົບ).

## ພິທີກຳການສູດຂວັນ

- ການຄູບລາບາສີທີ່ຮຽກວ່າ : ສູດຂວັນ ຫລື ສູ່ຂວັນນັ້ນ ປະເພນີລາວໄດ້ສືບທອດກັນມາແຕ່ບູຮານນະການຈົນຮອດປັດຈຸບັນ ໂດຍໄດ້ໃຫ້ຄວາມສຳຄັນຂອງຄຳວ່າ : " **ຂວັນ** " ອັນໝາຍເຖິງຈິດ ຫລືວິນຍານທີ່ສິງຢູ່ໃນຮ່າງກາຍຂອງເຮົາ ຖືວ່າມີ 30 ຂວັນເຮົາ 90 ຂວັນຫລວງ ດ້ວຍການຕ້ອນຮັບເວລາທີ່ກັບຈາກວຽກງານອັນທຸລະກັນດານ ຫລືວ່າ ການຈະພັດພາກຈາກຖິ່ນທີ່ເຄີຍອາໄສ ບາງຄົນກໍເຂົ້າໃຈວ່າ ເປັນພິທີຂອງສາສະໜາພຣາມໃນອິນເດຽ ແທ້ທີ່ຈິງແລ້ວ

ຄຳວ່າ : " **ຂວັນ** " ຫມາຍເຖິງກຳລັງໃຈ ຫລືພະລັງຈິດ ທີ່ມີໃນຄົນເຮົາ ທາງພຸດທະສາສະຫນາຖືວ່າແມ່ນ **ທະວັດຕິງສາກາບ** ອັນຫມາຍເຖິງ ອາການ 32 ຂອງຄົນເຮົາ ນັບແຕ່ ຜົມ, ຂົນ, ເລັບ, ແຂ້ວ, ໃນທາງພາສາປາລີວ່າ : " **ເກສາໂລມາ...** " ເປັນຕົ້ນ ສິ່ງເຫລົ່ານີ້ ອາດໄດ້ຮັບການກະທົບກະແທກຈາກສິ່ງແວດລ້ອມ ຫລື ອາລົມຕ່າງໆ ບາງເທື່ອເຮົາອາດຖືກລົ້ມປ່ວຍ ຫລື ເຂົ້າຮັກສາຢູ່ໂຮງຫມໍ ໂຮງຢາ ເມື່ອເຮົາມີສຸຂະພາບດີ ບໍ່ມີພະຍາດບາດເຈັບລົບກວນ ເພິ່ນກໍຈະເຮັດ ບາສີສູ່ຂວັນໃຫ້ ເພື່ອເປັນຂວັນ ແລະ ກຳລັງໃຈ. ນີ້ແມ່ນເຫດຜົນ ດ້ານການເຊື່ອຖືຂອງຄົນລາວ, ທີ່ຈິງແລ້ວ ການສູ່ຂວັນແມ່ນວິທີ ອວຍພອນ ແລະ ໃຫ້ກຳລັງໃຈແກ່ຄົນຜູ້ໃດຜູ້ນຶ່ງ ທີ່ຖືກເຄາະຮ້າຍ, ຜູ້ທີ່ມາ ພົບກັນໃຫມ່ ຫລືຜູ້ທີ່ຈະຈາກໄປແຫ່ງໃດແຫ່ງນຶ່ງ ... ໃຫ້ມີຈິດໃຈດີ ແລະ ມີສຸຂະພາບແຂງແຮງ ສູ້ຊົນຕໍ່ອຸປະສັກນາໆປະການ.

- ພິທີກຳກ່ຽວກັບການສູດຂວັນຕາມທີ່ເຮັດກັນມາ ບັນດາ ເຖົ້າແກ່ຜູ້ຍິງ ໄດ້ຈັດຫາຕອງກ້ວຍສົດ ປອດໃສ ມາຫຍິບໃຫ້ເປັນຮູບ ສ້ວຍຂຶ້ນຄືທາດ ຫລືຈອມທາດ ເອີ້ນວ່າ ຂັນຫມາກເບັງ ເພື່ອຈະຈັດຫາ ດອກໄມ້ສີຕ່າງໆ ມາສຽບແຊມໃຫ້ສວຍງາມ ການໃຊ້ໃບໄມ້ ຫລືໃບຕອງ ກ້ວຍນີ້ ຖືວ່າເປັນວັດຖຸ ທີ່ຍ່ອຍສະຫລາຍໄດ້ ບໍ່ເປັນພິດໄພຕໍ່ມະນຸດເຮົາ, ບາງເທື່ອກໍຈະເຮັດດ້ວຍວັດຖຸອື່ນໆ ເຊັ່ນ : ເອົາຍອດກ້ານພ້າວມາຕັດ ໃບອອກພໍສົມຄວນ ແລ້ວຜ່າກ້ານແຍກອອກໃຫ້ເປັນສີ່ດ້ານ ມັດປາຍ ໃຫ້ຈຸ້ມແຫລມເຂົ້າກັນ ຈັດໃສ່ພານ ຫລືຂັນໃບໃຫຍ່ກໍຈະໄດ້ຮູບຊົງ

ຄືຈອມທາດ ແລ້ວກໍເອົາດອກໄມ້ຕ່າງໆ ມາສຽບຕາມກີບຂອງໃບພ້າວ ທີ່ຕັດໄດ້ລະດັບພໍດີ ເບິ່ງກໍງາມດີ, ແຕ່ມີສິ່ງຫນຶ່ງທີ່ເຄີຍໄດ້ເຫັນໃນ ສະໄຫມນີ້ ແມ່ນມີເຕັກນິກໃຫມ່ຄື : ເອົາເຈ້ຍແຂງເຊິ່ງແມ່ນເຈ້ຍສີ ທີ່ໃຊ້ຕັດເຮັດຫມາກເບັງບູຊາພຣະນັ້ນ ມາເຮັດແທນ ເຊິ່ງກໍເຫັນວ່າ ໃຊ້ໄດ້ຫລາຍເທື່ອ ໂດຍເຮັດຮູບຊົງໄວ້ ໃຊ້ດອກໄມ້ສົດມາປະດັບເອົ ເມື່ອເສັດພິທີແລ້ວກໍເອົາດອກໄມ້ຖິ້ມ ເກັບໄວ້ໃຊ້ໃນເທື່ອຕໍ່ໄປໄດ້ອີກ ນັບວ່າປະຫຍັດໄປອີກແບບຫນຶ່ງ.

* ນອກຈາກດອກໄມ້ອັນຫມາກເບັງໃສ່ພາສູດຂວັນແລ້ວ ສິ່ງທີ່ ຂາດບໍ່ໄດ້ກໍແມ່ນຝ້າຍຂາວໆ ມາຕັດໃຫ້ພໍດີໃຊ້ຜູກແຂນ ແລະ ໃຊ້ຜ່ານ ພາຂວັນເບື້ອງນັ້ນເບື້ອງນີ້ ເພື່ອຜູ້ທີ່ເປັນເຈົ້າຂວັນຈະໄດ້ຈັບ ເມື່ອເພິ່ນ ສູດຂວັນ, ຫມໍເອີ້ນຂວັນ ແລະ ຍາດຕິພີ່ນ້ອງທີ່ໃກ້ຊິດຈະໄດ້ຈັບສິ້ນຝ້າຍ ນັ້ນນັ່ງອ້ອມພາຂວັນ.

ນອກນັ້ນກໍແມ່ນທຽນສີ (ທຽນເຜີ້ງ) ທີ່ໃຊ້ໃຕ້ເວລາສູດ ຖືວ່າເປັນ ທຽນໄຊ, ທຽນສີຈະເຫລັ້ມໃຫຍ່ກວ່າປົກກະຕິ ບາງເທື່ອກໍເອີ້ນວ່າ ທຽນເຫລັ້ມບາດ 1 ຄູ່ ໃນພານໃສ່ຫມາກເບັງຈະມີເຄື່ອງຕ່າງໆ ເຊັ່ນ : ມີໄຂ່ສຸກ 4 ຫນ່ວຍ, ກ້ວຍ, ເຂົ້າຫນົມ ແລະ ຂອງຫວານອື່ນໆ ໃສ່ໄວ້ ໃນພານພາຂວັນນັ້ນ, ບາງບ່ອນທີ່ເຈົ້າພາບພຽງພໍ ກໍຈະເພີ່ມເຫລົ້າໄຫ ໄກ່ຕົ້ມ ໃສ່ຖາດໃສ່ພາມາຕັ້ງຕື່ມ ແລະ ມີເຫລົ້າຢາເປັນແກ້ວ ມາຕັ້ງຕື່ມ ຮຽງພາຂວັນ ເພື່ອໃຫ້ຂວັນຕ່າງໆ ທີ່ມາແລ້ວກໍຈະໄດ້ດື່ມໄດ້ກິນ.

ຈາກນັ້ນ ກໍຈະຕ້ອງມີຫມໍສູດຂວັນ ເອີ້ນວ່າ : ຫມໍພອນ ຫລືຜູ້ເອີ້ນຂວັນ ເຊິ່ງກໍແມ່ນຜູ້ທີ່ມີສິນທັມ ເຄີຍບວດຮຽນມາກ່ອນ ຫລືບາງບ່ອນກໍໃຊ້ປຶ້ມອ່ານຂວັນມາອ່ານເອົາກໍໄດ້, ໂດຍທຳນຽມແລ້ວ ຜູ້ທີ່ຈະເປັນຫມໍພອນ ຕ້ອງນຸ່ງຂາວຫົ່ມຂາວ ຖືສິນຫ້າບໍລິສຸດ ຈຶ່ງຈະມີຄວາມສັກສິດ ສາມາດເອີ້ນຮຽກເອົາຂວັນ, ປັດຈຸບັນການນຸ່ງຖື ກໍໄດ້ປ່ຽນແປງໄປຕາມຍຸກສະໄຫມ ແຕ່ກໍຕ້ອງມີຜ້າພາດບ່າບ່ຽງຊ້າຍສະເຫມີ.

- ການປະກອບພິທີເອີ້ນຂວັນ, ສູດຂວັນ ອາດຈະໃຊ້ຂຶ້ນຕົ້ນດ້ວຍການສັກເຄເທວະດາ ຫລືສູດເປັນພາສາປາລີກ່ອນຜໍສົມຄວນ ຈຶ່ງຈະສູດຕາມພອນຂວັນທີ່ມີໃນປຶ້ມຫົວນີ້.

ພິທີກຳຕ່າງໆ ທີ່ໄດ້ກ່າວມານີ້ ອາດຈະມີຫລາຍອັນບໍ່ລະອຽດ ແຕ່ກໍຄົງຈະໃຫ້ຄວາມຮູ້ຄວາມເຂົ້າໃຈ ແລະ ນຳໃຊ້ປຶ້ມທີ່ໄດ້ພິມອອກຈຳຫນ່າຍ ຕາມຄຳຮຽກຮ້ອງຂອງສັງຄົມ ເຖິງວ່າຍັງມີບາງອັນບາງທ້ອງຖິ່ນໄດ້ມີຂໍ້ຄິດ ແລະ ການກະທຳມາແລ້ວ ກໍໃຫ້ນຳໃຊ້ ແລະ ປະຕິບັດກັນໄປຕາມຄວາມເຫມາະສົມ.

# ສາລະບານ


ໜ້າ

- ຄຳນຳ (ໃນການພິມຄັ້ງທີສອງ ) ກ
- ຄຳເຫັນຂອງ ກົມພິມຈຳໜ່າຍ ແລະ ຫໍສະໝຸດ ຄ
- ບົດນຳໃນການພິມເທື່ອທີນຶ່ງ (ໂຄງການໃບລານ) ຈ
- ບົດແນະນຳ ໃນການປະກອບພິທີກຳຕ່າງໆ ໃນການພິມເທື່ອທີສອງ (ຫໍສະໝຸດແຫ່ງຊາດ) ຍ

**ພຸດທະພິທີທາງສາສະໜາ**

- ຄຳໄຫວ້ ແລະ ບູຊາພຣະຣັດຕະນະໄຕ 1
- ວັນທານ້ອຍ-ວັນທາໃຫຍ່, ຄຳອາລາດທະນາສິນຫ້າ 2
- ຄຳອາລາດທະນາອຸໂປສົດສິນ, ຄຳອາລາດທະນາສູດມຸງຄຸນ 3
- ຄຳອາລາດທະນາເທດ - ທຳວັນທຳມະສະວະນະ 4
- ຄຳເຊີນຂວັນ (ກອນຈະສູດຂວັນ) 5
- ຄຳຄາລະວະພະພຸດທະຮູບ (ບຸນປີໃໝ່ລາວ) 7
- ຄຳບາສີພະພິກຂຸສົງ 8
- ຄຳຖວາຍທານສາມັນ 10
- ຄຳຖວາຍສັງຄະທານ, ຄຳຖວາຍເຂົ້າແຈກ 11
- ຄຳຖວາຍເຂົ້າສາກ, ຄຳຖວາຍສັງຄະພັດ (ເຂົ້າບູຊາ) 12
- ຄຳຖວາຍເຂົ້າສານ 13
- ຄຳຖວາຍຜ້າຊຸມ (ຜ້າໄຕ), ຄຳຖວາຍຜ້າຈຳນຳພັນສາ 14


24/VII ຫ້າມຈຳໜ່າຍ

- ຄຳຖວາຍຜ້າອາບນ້ຳຝົນ, ຄຳຖວາຍຜ້າປ່າ (ຜ້າບັງສະກຸນ) 15
- ຄຳຖວາຍຜ້າອັດເຈກະຈີວອນ (ຜ້າຮີບດ່ວນ),
ຄຳຖວາຍເສນາສະນະ 16
- ຄຳຖວາຍໂຮງອຸໂບສົດ, ຄຳຖວາຍສ້ວມຖ່າຍໜັກ 17
- ຄຳຖວາຍຂົວ, ຄຳຖວາຍຜາສາດເຜິ້ງ 18
- ຄຳຖວາຍດອກໄມ້ທູບທຽນ, ຖວາຍທຸງ, ຖວາຍຢາຮັກສາໂລກ 19
- ຄຳຖວາຍຜ້າກະຖິນແບບເກົ່າ ແລະ ແບບໃໝ່ 20
- ຄຳຖວາຍອັດຖະບໍລິຂານ, ຄຳຖວາຍນ້ຳມັນ ນ້ຳເຜິ້ງ ນ້ຳອ້ອຍ 21
- ຄຳຖວາຍໝາກໄມ້ຕ່າງໆ 22
- ຄຳຖວາຍສາລານ້ຳ, ຄຳຖວາຍລ້ອງ (ລະຄັງ) 23
- ຄຳຖວາຍລະຄັງ, ຄຳຖວາຍຕະກຽງ 24
- ຄຳຖວາຍດອກໄຟຟ້າ, ຄຳຖວາຍກອງ 25
- ຄຳຖວາຍທຳມາດ, ຄຳຖວາຍໜັງສືພະໄຕປິດົກ 26
- ຄຳຖວາຍເກົ້າອີ້ນວມ, ຄຳຖວາຍຕຽງ 27
- ຄຳຖວາຍຕັ່ງ, ຄຳຖວາຍເກົ້າອີ້ນວມ, ຕຽງ, ຕັ່ງ 28
- ຄຳຖວາຍຈ້ອງ ແລະ ເກີບ, ຄຳຖວາຍຈ້ອງ 29
- ຄຳຖວາຍເກີບ, ຄຳຖວາຍຜ້າພົມ 30
- ຄຳຖວາຍຂວານ, ພ້າ ແລະສິ່ວ, ຄຳຖວາຍຂວານ 31
- ຄຳຖວາຍພ້າ, ຄຳຖວາຍສິ່ວ 32
- ຄຳຖວາຍຖ້ວຍ ແລະ ຊາມ, ຄຳຖວາຍຖ້ວຍ 33
- ຄຳຖວາຍຊາມ, ຄຳຖວາຍພັດຕາຫານໃນວັນລົງອຸໂປສົດ 34
- ຄຳຖວາຍພັດຕາຫານ ໃນວັນສາມັກຄີອຸໂປສົດ
ຄຳຖວາຍພັດຕາຫານ ໃຫ້ແກ່ພິກຂຸຜູ້ເປັນໄຂ້ 35

# ຂໍໂທດຫຼາຍໆ

ປຶ້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ